# San Diego Unified School District

EUGENE BRUCKER EDUCATION CENTER (619) 725-5506
4100 Normal Street, San Diego, CA 92103-2682

**Carl A. Cohn**
Superintendent of Schools


ເດືອນພຶສຈິກາ, **2007**

ເຖິງພໍ່ແມ່ /ຜູ້ປົກຄອງນັກຮຽນທີ່ນັບຖື:

ຫລັງຈາກພວກເຮົາກັບຄືນເຂົ້າໂຮງຮຽນ ຫລັງຈາກໄຟໄຫມ້ປ່ານັ້ນ, ຂ້າພະເຈົ້າຢາກຈະໃຊ້ເວລາທົບທວນຄືນກັບທານວາ ສູນກາງສຶກສາແຊນດິເອໂກ ແມນໄດ້ຕັດສິນໃຈແນວແນເພື່ອຄວາມປອດພັຍຂອງນັກຮຽນພວກເຮົາ ເຊັ່ນດຽວ ກັບເພື່ອຄວາມສຳເຣັດໃນການສຶກສາຮ່ຳຮຽນຂອງເຂົາເຈົ້າ. ນີ້ເປັນສິ່ງສຳຄັນທີ່ທານຄວນຮູ້ ການວັດແທກຄວາມປອດພັຍໃນໂຮງຮຽນ ເປັນໃຫ້ແນ່ໃຈວາເດັກຂອງທານມີສະພາບແວດລ້ອມປອດພັຍ ແລະ ອົບອຸ່ນເພື່ອສຶກສາຮ່ຳຮຽນຢູ່ໃນໂຮງຮຽນນັ້ນ.

- ສູນກາງສຶກສາແຊນດິເອໂກ ມີເຈົ້າຫນ້າທີ່ຕຳຣວດ **45** ຄົນ ແລະ ມີເຈົ້າຫນ້າທີ່ຕຳຣວດບໍຣິການຊຸມຊົນອີກ **26** ຄົນ ສຳຫລັບເຮັດວຽກໃນໂຮງຮຽນປະຖົມ, ໂຮງຮຽນພາກກາງ ແລະ ໂຮງຮຽນມັທຍົມ. ພວກເຈົ້າຫນ້າທີ່ເຫລົ່ານີ້ ຝຶກອົບຮົມປະຈຳເພື່ອຕອບໂຕ້ຢ່າງເຂັ້ມງວດກັບທຸກໆສະພາບການ.
- ແຕ່ລະໂຮງຮຽນຂຽນ ແລະ ຮັກສາແຜນປ້ອງກັນຄວາມປອດພັຍໄວ, ຊຶ່ງມີລາຍລະອຽດຂອງວິທີການຍາມເກີດເຫດການສຸກເສີນ, ການກະຕຽມຍາມເກີດພັຍຮ້າຍແຮງ ແລະ ການໃຊ້ມາຕາການກັບເຫດການຕາງໆທີ່ສ້າງຄວາມສູຍອາງຂວັນແກພວກນັກຮຽນ ແລະ ພະນັກງານ. ໂຮງຮຽນໄດ້ຝຶກຫັດລະບຽບ ຂອງເຫດການສຸກເສີນເຫລົ່ານີ້ຢູ່ປະຈຳ.
- ການຢ່າງເລາະຮັກສາຄວາມສງົບຂອງພໍ່ແມ່ ຮວມມີອາສາສມັກພໍ່ແມ່ນັກຮຽນ, ພະນັກງານ ແລະ ຊຸມຊົນ. ເຂົາເຈົ້າຖືກຝຶກແບບໂດຍ ເຈົ້າຫນ້າທີ່ຕຳຣວດໂຮງຮຽນກອງປ້ອງກັນພັຍ ແລະ ໄດ້ພາກັນຈັບຫູຈັບຕາໃສ່ໂຮງຮຽນເວລາເດັກຂອງທານມາເຖິງໂຮງຮຽນ.
- ພວກເຮົາຍັງມີກອງຕ້ານຜູ້ຮ້າຍຂອງໂຮງຮຽນ (**Campus Crime Stoppers**), ທີ່ເປັນຄູ່ເຮັດວຽກຮ່ວມກັບກອງຕ້ານຜູ້ຮ້າຍ ກຳແພງເມືອງແຊນດິເອໂກ ຊຶ່ງໄດ້ວາງຮາງວັນໃຫ້ພໍ່ແມ ແລະ ນັກຮຽນ ລາຍງານການກະທຳຜິດກົດຫມາຍ.
- ບັນດາຄູແນະນຳໂຮງຮຽນມັທຍົມກໍ່ໄດ້ຝຶກແອບ ນັກຮຽນແນະນຳນັກຮຽນ ແລະ ເປັນຜູ້ໄກ່ເກັ່ຍບັນຫາຖົງຖຽງກັນ. ພວກເຮົາມີກຸມຊ່ວຍເຫລືອພວກນັກຮຽນເອງ ຊຶ່ງເນັ້ນຫນັກໃສການຄວບຄຸມຄວາມໃຈຮ້າຍ ແລະ ຊ່ວຍເຫລືອບັນຫາຕາງໆ ເພື່ອປ້ອງກັນຄວາມຮ້າຍແຮງເກີດຂຶ້ນ.

ທຸກວັນນີ້ໂຮງຮຽນຂອງພວກເຮົາມີຄວາມປອດພັຍ ຍ້ອນຜົນແຫ່ງຄວາມພຍາຍາມເຫລົ່ານີ້. ພວກເຮົາເລເຫັນລະດັບການກະທຳຜິດກົດຫມາຍໃນສູນກາງສຶກສາລົດນ້ອຍລົງໄປຕລອດ. ເພື່ອໃຫ້ຄວາມເຂັ້ມແຂງເຫລົ່ານີ້ດຳເນີນຕໍ່ໆໄປ, ພວກເຮົາຕ້ອງການຄວາມຊວຍເຫລືອ ແລະ ການສນັບສນູນຂອງທານ.

ຂ້າພະເຈົ້າຂໍຊຸກຍູ້ໃຫ້ທ່ານໂອ້ລົມກັບລູກກ່ຽວກັບນະໂຍບາຍບໍ່ໂຍະຍານຂອງສູນກາງສຶກສາ. ບອກໃຫ້ແຈ່ມແຈ້ງວາທານສນັບສນູນນະໂຍບາຍ ແລະ ກົດລະບຽບຂອງໂຮງຮຽນ ເພື່ອຊ່ອຍສ້າງໃຫ້ເປັນບອນປອດພັຍເພື່ອໃຫ້ນັກຮຽນທຸກໆຄົນໄດ້ສຶກສາຮ່ຳຮຽນ. ຮັບເອົາຫນ້າທີ່ໃນໂຮງຮຽນເດັກຂອງທານ ແລະ ຮຽນຮູ້ກຽວກັບລະບຽບການ ແລະ ແຜນການຫລັບພັຍຂອງໂຮງຮຽນ. ເປັນບຸກຄົນຕົວຢ່າງໃນການແກ້ໄຂບັນຫາແບບສັນຕິວິທີ.

ຂໍຂອບໃຈທີ່ເຂົ້າຮ່ວມຄວາມພຍາຍາມຂອງພວກເຮົາເພື່ອເຮັດໃຫ້ນັກຮຽນທູກຄົນມີໂອກາດຮ່ຳຮຽນ ແລະ ສ້າງສະພາບແວດລ້ອມອັນດີເພື່ອຄວາມປອດພັຍ ແລະ ການຮ່ຳຮຽນ.

ດ້ວຍຄວາມນັບຖືຢ່າງສູງ,

**Carl A. Cohn**
**Superintendent of Schools**

ຄຳເພີ້ມທ້າຍ. ຈຳໄວ້ວ່າ, ໂຮງຮຽນປິດ ໃນອາທິດ **19 – 23** ພຶສຈິກາ, ຊ່ວງພັກບຸນຂອບຄູນພະເຈົ້າ (**Thanksgiving Break**). ຂໍໃຫ້ມີຄວາມສຸຂ ແລະ ພັກຜ່ອນເຕັມທີ່ດ້ວຍ.